![DWD Indiana Department of Workforce Development]

# ໂຄງການແລກປ່ຽນແຮງງານ Indiana Career Connect

ຄຳແນະນຳລະບົບ

ຍິນດີຕ້ອນຮັບສູ່ວິດີໂອໃຫ້ຂໍ້ມູນກ່ຽວກັບລະບົບແລກປ່ຽນແຮງງານຂອງ Indiana Career Connect. Indiana Career Connect ຫຼື ICC ເວົ້າສັ້ນໆ, ໃຫ້ໂອກາດກັບຜູ້ຊອກຫາວຽກເຮັດເພື່ອຊອກວຽກ, ສ້າງປະຫວັດຫຍໍ້ ແລະ ຄົ້ນຫາການສຶກສາ ແລະ ໂອການທາງດ້ານການຝຶກອົບຮົມ.



DWD ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນທີ່ບໍລິຫານໂຄງການທີ່ໃຫ້ໂອກາດເທົ່າທຽມກັນ.
ບຸກຄົນພິການຈະໄດ້ຮັບບໍລິການຊ່ວຍເຫຼືອ ແລະ ບໍລິການເສີມຕາມຄໍາຂໍ (ເບີໂທ TDD/TTY: 1-800-743-3333).
ການບໍລິການຕ່າງໆໃນການແປພາສາ ແລະ ການແປເອກະສານຟຼີຍັງມີຫາກຂໍມາ.

DWD ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນທີ່ບໍລິຫານໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ບຸກຄົນພິການຈະໄດ້ຮັບບໍລິການຊ່ວຍເຫຼືອ ແລະ ບໍລິການເສີມຕາມຄໍາຂໍ (ເບີໂທ TDD/TTY: 1-800-743-3333).
ການບໍລິການຕ່າງໆໃນການແປພາສາ ແລະ ການແປເອກະສານຟຼີຍັງມີຫາກຂໍມາ.




ລະບົບແລກປ່ຽນແຮງງານແມ່ນຫຍັງ?

ລະບົບການແລກປ່ຽນແຮງງານຈະເຊື່ອມຕໍ່ຜູ້ຊອກວຽກເຮັດກັບນາຍຈ້າງ, ຊ່ວຍຜູ້ຊອກວຽກເຮັດຄົ້ນຫາການຈ້າງງານ ແລະ ນາຍຈ້າງເຕີມຕຳແໜ່ງວຽກທີ່ເປີດຮັບສະໝັກ.

ຜູ້ຮຽກຮ້ອງສິດທິຈາກລັດ Hoosier ຈະຕ້ອງລົງທະບຽນໃນລະບົບ ICC ແລະ ຕ້ອງສາມາດ, ພ້ອມ ແລະ ສະແຫວງຫາວຽກເຕັມເວລາໄດ້ເພື່ອໃຫ້ມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ.

ທ່ານກຳລັງຊອກຫາການຊ່ວຍເຫຼືອດ້ານການຊອກວຽກເຮັດແບບໃດ?

- ຂໍ້ມູນເຊີງເລິກກ່ຽວກັບທ່າອ່ຽງຕະຫຼາດແຮງງານໃນປັດຈຸບັນໃນພື້ນທີ່ຂອງທ່ານເປັນແນວໃດ?
- ຂໍ້ມູນກ່ຽວກັບໂຮງຮຽນ ແລະ ໂຄງການການສຶກສາເປັນແນວໃດ?

- ຕ້ອງການຄວາມຊ່ວຍເຫຼືອໃນການສ້າງ ຫຼື ໂພສປະຫວັດຫຍໍ້ຂອງທ່ານບໍ?
- ມີການເປີດຮັບສະໝັກງານໃກ້ທ່ານບໍ?

ICC ພ້ອມທີ່ຈະໃຫ້ຄວາມຊ່ວຍເຫຼືອ. ເຂົ້າສູ່ລະບົບມື້ນີ້ເລີຍ ເພື່ອດຳເນີນການຂັ້ນຕອນຖັດໄປໃນການຊອກວຽກເຮັດຂອງທ່ານ.




ເຈົ້າຮູ້ບໍ່ວ່າ ICC ບໍ່ມີຄ່າໃຊ້ຈ່າຍສໍາລັບທັງຜູ້ຊອກຫາວຽກເຮັດ ແລະ ນາຍຈ້າງ? ວິດີໂອນີ້ ຈະແນະນໍາທ່ານໃຫ້ຮູ້ວ່າ ICC ສາມາດຊ່ວຍປັບປຸງຄວາມພະຍາຍາມຊອກວຽກເຮັດຂອງ ທ່ານ ແລະ ຊ່ວຍໃຫ້ທ່ານຈັບຄູ່ກັບນາຍຈ້າງໄດ້ໄວຂຶ້ນໄດ້ແນວໃດ.




ເມື່ອທ່ານຍື່ນຄຳຮ້ອງຂໍການປະກັນການຫວ່າງງານ, ບັນຊີ ICC ຈະຖືກສ້າງຂື້ນໂດຍອັດຕະໂນມັດໃຫ້ທ່ານ ຫາກທ່ານຍັງບໍ່ທັນໄດ້ມີບັນຊີ, ໂດຍການນຳໃຊ້ຂໍ້ມູນທີ່ທ່ານໃຫ້ມາ. ທ່ານຊະເຂົ້າສູ່ລະບົບ ICC ໂດຍການນຳໃຊ້ຊື່ຜູ້ໃຊ້ ແລະ ລະຫັດຜ່ານດຽວກັນ ທີ່ທ່ານໄດ້ໃຊ້ເພື່ອຍື່ນຄຳຮ້ອງຂໍການຫວ່າງງານຂອງທ່ານ.

ຫາກຕ້ອງການຄວາມຊ່ວຍເຫຼືອກັບ ICC, ໃຫ້ເຂົ້າໄປທີ່ສູນບໍລິການວຽກເຮັດໃຫ້ຄົນອາເມຣິກາຂອງ WorkOne ໃນທ້ອງຖິ່ນ, ຊຶ່ງພະນັກງານສາມາດຊ່ວຍໃນການຣີເຊັດລະຫັດ ແລະ ການຄົ້ນຫາ.




ICC ຊ່ວຍຈັບຄູ່ຜູ້ຊອກວຽກເຮັດທີ່ມີຄຸນສົມບັດ ແລະ ນາຍຈ້າງ.

ຜູ້ຊອກວຽກເຮັດສາມາດຄົ້ນຫາວຽກ, ສ້າງ ແລະ ໂພສປະຫວັດຫຍໍ້ ແລະ ຄົ້ນຫາໂອກາດດ້ານການສຶກສາ ແລະ ການຝຶກອົບຮົມ.

ນາຍຈ້າງສາມາດໂພສລາຍການວຽກ ແລະ ຄົ້ນຫາຜູ້ສຳໝັກໄດ້.

ຕອນນີ້, ເຮົາລອງມາຄົ້ນຫາຄຸນສົມບັດສຳຄັນຂອງລະບົບການແລກປ່ຽນແຮງງານຂອງ

Indiana Career Connect ເບິ່ງ.




ICC ມີຕົວຕິດຕາມຄວາມຄືບໜ້າໃນຕົວເພື່ອແນະນໍາຜູ້ໃຊ້ຜ່ານຂັ້ນຕອນທີ່ສໍາຄັນ ເຊັ່ນ: ຕົວຊ່ວຍສ້າງປະຫວັດ.

- ທ່ານສາມາດສ້າງປະຫວັດຫຍໍ້ໃໝ່ ຫຼື ອັບໂຫຼດປະຫວັດຫຍໍ້ທີ່ມີຢູ່ແລ້ວໄດ້.
- ຕົວຊ່ວຍສ້າງປະຫວັດຈະຊ່ວຍທ່ານສ້າງປະຫວັດຫຍໍ້ໂດຍການຈັດເກັບຂໍ້ມູນສໍາຄັນໄວ້.
- ເມື່ອເຮັດສໍາເລັດແລ້ວ, ທ່ານສາມາດສ້າງປະຫວັດຫຍໍ້ທີ່ປັບແຕ່ງໃຫ້ເໝາະສົມກັບຕໍາແໜ່ງວຽກ ຫຼື ອາຊີບສະເພາະໄດ້ສູງເຖິງສິບສະບັບ.




ຄຸນສົມບັດການຊອກວຽກເຮັດຂອງ ICC ຈະຊ່ວຍໃຫ້ທ່ານກອງການໂພສເປີດສະໝັກງານ: ຕາມອາຊີບ/ຕໍາແໜ່ງວຽກ, ໄລຍະຫ່າງຈາກທີ່ຕັ້ງຂອງທ່ານ, ເງິນເດືອນ, ລະດັບການສຶກສາ ແລະ ອື່ນໆອີກ.

ນອກຈາກນັ້ນ, ທ່ານຍັງສາມາດຊອກຫາຕາມອຸດສາຫະກໍາ ຫຼື ຊື່ນາຍຈ້າງສະເພາະໄດ້.




ICC ມອບຂໍ້ມູນຕະຫຼາດແຮງງານອັນມີຄ່າ, ມັກເອີ້ນວ່າແມ່ນ LMI, ເພື່ອຊ່ວຍໃນການວາງແຜນອາຊີບ.

LMI ຈະຊ່ວຍທ່ານເພື່ອ:

- ຊອກຫາອາຊີບ ແລະ ເສັ້ນທາງອາຊີບ
- ເຂົ້າເຖິງຄວາມສົນໃຈຂອງທ່ານໃນອຸດສາຫະກຳໃໝ່
- ກວດສອບການສຶກສາ ແລະ ຂໍ້ກຳນົດອື່ນໆສຳລັບການໂຜສຮັບສະໝັກວຽກ

ນອກຈາກນີ້ແລ້ວ, ICC ຍັງສະເໜີການປະເມີນຟຼີເພື່ອຊ່ວຍໃຫ້ທ່ານລະບຸທັກສະ ແລະ ຄວາມຮູ້ທີ່ກ່ຽວຂ້ອງກັບວຽກ, ຄົ້ນຫາອາຊີບທີ່ເຂົ້າກັບຄວາມສົນໃຈ ແລະ ຄ່ານິຍົມໃນການເຮັດວຽກຂອງທ່ານ.




ໃນຖານະເປັນຜູ້ໃຊ້ ICC, ທ່ານຈະມີສິດເຂົ້າເຖິງກະການຂ່າວສ່ວນຕົວພາຍໃຕ້ຫົວຂໍ້, "ສະຖານທີ່ເຮັດວຽກຂອງຂ້ອຍ." ກະດານຂ່າວຂອງທ່ານຈະແນະນຳທ່ານໄປສູ່ຄຸນສົມບັດຂອງລະບົບ ICC. ມັນສະເໜີຄຳແນະນຳທີ່ປັບໃຫ້ເໝາະສົມຕາມຄວາມສົນໃຈຂອງທ່ານທີ່ເລືອກໄວ້. ທ່ານສາມາດປັບແຕ່ງເນື້ອຫາໃນກະດານຂ່າວຂອງທ່ານໃຫ້ເຂົ້າກັບເປົ້າໝາຍອາຊີບຂອງທ່ານໄດ້.

ໂດຍສະເລ່ຍແລ້ວມີ**ນາຍຈ້າງຫຼາຍກວ່າ 900 ລາຍ**ທີ່ລົງທະບຽນໃນ **Indiana Career Connect.** ປີຜ່ານມາ, ICC ໄດ້ເປີດຮັບສະໝັກຫຼາຍກວ່າ **300,000 ຕຳແໜ່ງງານ.**

**ລະບົບການແລກປ່ຽນແຮງງານຂອງ Indiana Career Connect** ພ້ອມທີ່ຈະໃຫ້ຄວາມຊ່ວຍເຫຼືອທ່ານກັບຄວາມຕ້ອງການໃນການຊອກຫາວຽກເຮັດທັງໝົດຂອງທ່ານໂດຍ**ບໍ່ມີຄ່າໃຊ້ຈ່າຍ**.

INDIANA CAREER CONNECT

INDIANA DEPARTMENT OF WORKFORCE DEVELOPMENT

ການໂພສຮັບສະໝັກງານຂອງ ICC ດຶງຂໍ້ມູນຈາກເວບໄຊຊອກວຽກອື່ນໆ, ຊ່ວຍເພີ່ມໂອກາດໃນການຈັບຄູ່ກັບວຽກຂອງທ່ານ. ໂດຍສະເລ່ຍແລ້ວ ນາຍຈ້າຍຫຼາຍກວ່າ 900 ໄດ້ລົງທະບຽນໄວ້ໃນ ICC. ປີຜ່ານມາໄດ້ມີການໂພສຮັບສະໝັກງານຫຼາຍກວ່າ 300,000 ຕຳແໜ່ງງານ. ICC ເປັນສູນກາງອາຊີບຄົບວົງຈອນຂອງທ່ານ, ຊຶ່ງມອບເຄື່ອງມື ແລະ ຊັບພະຍາກອນຟຼີເພື່ອຊ່ວຍທ່ານກັບໄປເຮັດວຽກໄດ້ໄວຂຶ້ນ.




ສໍາລັບແຫຼ່ງຊັບພະຍາກອນຂອງການຊອກວຽກເຮັດເພີ່ມເຕີມ, ກະລຸນາເຂົ້າໄປທີ່ສູນບໍລິການວຽກເຮັດໃຫ້ຄົນອາເມຣິກາໃນ WorkOne ໃນທ້ອງຖິ່ນຂອງທ່ານ. ຊອກຫາສະຖານທີ່ຂອງ WorkOne ທີ່ຢູ່ໃກ້ທ່ານໃນໜ້າເວບຂອງພວກເຮົາ www.in.gov/dwd/WorkOne/locations.html




WorkOne ແມ່ນໂຄງການ/ນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ.
ນາຍຈ້າງ ຫຼື ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ ບຸກຄົນພິການຈະໄດ້ຮັບບໍລິການຊ່ວຍເຫຼືອ ແລະ ບໍລິການເສີມຕາມຄໍາຂໍ. ການບໍລິການຕ່າງໆໃນການແປພາສາ ແລະ ການແປເອກະສານຟຼີຍັງມີຫາກຂໍມາ.

ຫາກທ່ານຄິດວ່າທ່ານຖືກເລືອກປະຕິບັດ ທ່ານອາດຈະຍື່ນຄໍາຮ້ອງທຸກພາຍໃນ 180 ວັນນັບຈາກວັນທີ່ຖືກລະເມີດ, ຕິດຕໍ່ທ່ານໜ້າທີ່ຂອງ EO ໃນພື້ນທີ່ຂອງທ່ານຜ່ານຫ້ອງການຂອງ WorkOne ໃນທ້ອງຖິ່ນຂອງທ່ານ ຫຼື ສົ່ງຄໍາຮ້ອງທຸກໄປທີ່:

Director, Civil Rights Center (CRC)
U.S. Department of Labor
200 Constitution Avenue NW
Room N- 4123, Washington, DC 20210

INDIANA DEPARTMENT OF WORKFORCE DEVELOPMENT

**ເຂົ້າໄປທີ່ເວບໄຊຂອງພວກເຮົາ ສໍາລັບແຫຼ່ງຊັບພະຍາກອນເພີ່ມເຕີມ.**

**dwd.in.gov**

ຫາກທ່ານມີຄໍາຖາມກ່ຽວກັບວີດີໂອນີ້ ແລະ ບໍ່ສາມາດຄົ້ນຫາຄໍາຕອບໄດ້ໃນເວບໄຊຂອງ DWD, ກະລຸນາຖາມຜູ້ນໍາທາງບໍລິການການຈ້າງງານລະຫວ່າງກອງປະຊຸມໜຶ່ງຕໍ່ໜຶ່ງຂອງທ່ານທີ່ຈະມາເຖິງນີ້.

ທ່ານໄດ້ເຮັດສໍາເລັດວີດີໂອທີ່ສາມຂອງພວກເຮົາກ່ຽວກັບລະບົບການແລກປ່ຽນແຮງງານຂອງ Indiana Career Connect. ກະລຸນາເບິ່ງວີດີໂອຖັດໄປໃນສູນບໍລິການຊອກວຽກຂອງ WorkOne America ກ່ອນໜ້າການນັດໝາຍການສໍາພາດເບື້ອງຕົ້ນໜຶ່ງຕໍ່ໜຶ່ງຂອງທ່ານທີ່ຈະມາຮອດນີ້.